# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 10 ກັນຍາ 2023 (09-10-2023)

---

## ອະທິຖານດ້ວຍໃຈຈົດຈໍ່

**ຈຸດສຳຄັນໃນບົດຮຽນ:** ການອະທິຖານຂອງເຮົາເຮັດໃຫ້ແຕກຕ່າງຢ່າງແທ້ຈິງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ບາງທີທ່ານຮູ້ຈັກຄວາມຮູ້ສຶກບໍ່ສະບາຍໃຈທີ່ຈະເອົາຊະນະຕໍ່ພາລະໜ້າທີ່ທີ່ຢູ່ຕໍ່ໜ້າທ່ານ. ບາງທີທ່ານອາດຫາກໍ່ໄດ້ອາບນ້ຳທີ່ມີທໍ່ວບົວຮົ່ວ. ຫຼືບາງທີທ່ານມີຣົດເລີ້ມມີສຽງຜິດປົກກະຕິ. ຫຼືບາງທີທ່ານກຳລັງອ່ານຕຳລາເຮັດອາຫານທີ່ເຕັມໄປດ້ວຍເຄື່ອງປະກອບແລະເທັກນິກທີ່ທ່ານບໍ່ຮູ້ຈັກມາກ່ອນ. ເວັ້ນເສັຽແຕ່ທ່ານຊຳນານດ້ານນ້ຳປະປາ, ເປັນຊ່າງສ້ອມແປງຣົດ, ຫຼືສີມືດ້ານການປຸງແຕ່ງອາຫານ, ທ່ານອາດມີຄວາມຮູ້ສຶກວ່າຂາດກຳລັງ. ແລ້ວທ່ານຈະເຮັດແນວໃດ?

*ເມື່ອໃດທ່ານຮູ້ສຶກວ່າບໍ່ມີຊ່ອງທາງສ້ອມແປງສິ່ງໃດສິ່ງນຶ່ງ?*

ພວກເຮົາສ່ວນຫຼາຍຮູ້ຊ່ອງທາງແກ້ໄຂໂດຍ-ທາງອິນເຕີເນັດ! ພົບຂໍ້ມູນພ້ອມດ້ວຍສິ່ງຕ່າງໆທີ່ຈຳເປັນທີ່ຜູ້ຊ່ຽວຊານໄດ້ວາງໄວ້ພ້ອມແລ້ວໃນທາງອອນໄລນ໌ເພື່ອຊ່ວຍທ່ານ. ດ້ວຍການກົດປຸ່ມສອງສາມອັນ, ພວກເຮົາສາມາດພົບສິ່ງຕ່າງໆທີ່ເຮົາຕ້ອງການເພື່ອກ້າວໄປຂ້າງໜ້າ. ແຕ່ລອງຄິດເບິ່ງວ່າການມີທາງເຂົ້າໄປນັ້ນແລ້ວ ແຕ່ບໍ່ເຄີຍໃຊ້ມັນຈັກເທື່ອ. ພາບທີ່ເຫັນນັ້ນຈະເຮັດໃຫ້ເປັນລ່ອຍເພາະບັນຫາທີ່ຢູ່ຕໍ່ໜ້າທ່ານ ແລະກໍພຽງແຕ່ຫວັງວ່າມັນຈະຫ່າງຫາຍອອກໄປ. ໃນຄວາມເປັນຈິງແລ້ວ, ມັນບໍ່ໄດ້ຍາກທີ່ຈະຄິດເຫັນພາບ ເພາະວ່າພວກເຮົາເຄີຍທຳສິ່ງທີ່ສ່ອນໃຫຍ່ຍາກກວ່ານ້ຳປະປາ, ຫຼືການປຸງແຕ່ງອາຫານມາແລ້ວ, ພວກເຮົາເຮັດໃນຊີວິດ-ຈິງ ເຄີຍສູ້ຊົນ ແລະຍາກລຳບາກໃນໂລກທຸກວັນນີ້.

ພວກເຮົາເຂົ້າເຖິງແຫຼ່ງທີ່ມີຣິດອຳນາດແຮງກວ່າທາງອິນເຕີເນັດຄືໂດຍທາງອະທິຖານ, ແຕ່ຫຼາຍໆເທື່ອເຮົາບໍ່ໄດ້ອະທິຖານດ້ວຍໃຈຈົດຈໍ່ໃນຍາມປະເຊີນກັບບັນຫາເຫຼົ່ານີ້. ພວກເຮົາກັບເລືອກເຊື່ອໃນປັນຍາ ແລະຄວາມສາມາດຂອງເຮົາເອງເພື່ອຫາຊ່ອງທາງຫຼືເຮັດດ້ວຍວິທີການຂອງພວກເຮົາ ຜ່ານສິ່ງທີ່ຈູ່ໂຈມພວກເຮົາ. ແຕ່ ດັ່ງທີ່ເຮົາຈະໄດ້ເຫັນໃນຕົວຢ່າງຂອງດານີເອນ, ການອະທິຖານຄືທາງດຽວທີ່ເຮົາສາມາດເຂົ້າເຖິງແຫຼ່ງສູງສຸດ-ການອະທິຖານເຮັດໃຫ້ແຕກຕ່າງແທ້.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

## ການສຶກສາພຣະຄັມພີ

### 1. <u>ດານີເອນ 2:13-16.</u>

*13ດັ່ງນັ້ນ ຈຶ່ງມີພຣະຣາຊອົງການປະກາດອອກໄປວ່າ ໃຫ້ຂ້າພວກຣາຊບັນດິດທັງໝົດ ພ້ອມທັງດານີເອນ ແລະເພື່ອນຝູງຂອງເພິ່ນ.*
*14ຕໍ່ມາ ດານີເອນໄດ້ບອກຢ່າງມີພິກໄຫວແກ່ ອາຣີໂອກ ຜູ້ບັນຊາການທະຫານປະຈຳພຣະຣາຊວັງ ຜູ້ຊຶ່ງໄດ້ຮັບຄຳສັ່ງໃຫ້ອອກໄປ*
*ຂ້າທີ່ປຶກສາທັງຫຼາຍ. 15ເພິ່ນໄດ້ຖາມອາຣີໂອກວ່າ, "ເປັນຫຍັງ ພຣະຣາຊາຈຶ່ງອອກຄຳສັ່ງຮຸນແຮງເຊັ່ນນີ້?" ອາຣີໂອກກໍເລົ່າເຣື່ອງ*
*ທີ່ເກີດຂຶ້ນໃຫ້ ດານີເອນຮູ້. 16ດານີເອນໄດ້ເຂົ້າເຝົ້າພຣະຣາຊາທັນທີແລະທູນຂໍໃຫ້ພຣະອົງເລື່ອນກຳນົດເວລາປະຫານອອກໄປ*
*ເພື່ອວ່າເພິ່ນຈະໄດ້ຖວາຍຄຳແກ້ຄວາມຝັນແດ່ພຣະອົງ.*

ໃນເທື່ອກ່ອນ, ພວກເຮົາອ່ານບົດສລຸບໃນສິ່ງທີ່ເກີດຂຶ້ນກັບດານີເອນແລະເພື່ອນຂອງເພິ່ນສາມຄົນຣະຫວ່າງການຝຶກອົບຮົມສາມປີ: "ພຣະເຈົ້າໄດ້ປະທານຄວາມຮູ້ແລະຄວາມເຂົ້າໃຈ ໃນວັນນະຄະດີແລະປັນຍາທຸກປະເພດແກ່ຊາຍໜຸ່ມສີ່ຄົນນີ້" (ດນອ 1:17). ເຖິງວ່າ

ເຂົາຈະໄດ້ຮັບການສຶກສາຈາກເຫຼົ່າຄຣູທີ່ດີທີ່ສຸດໃນຄາວນັ້ນກໍຕາມ, ພຣະເຈົ້າກໍາລັງທໍາງານ, ໄດ້ໃຫ້ຄວາມເຂົ້າໃຈແລະຄວາມຮູ້ແກ່ເຂົາເກີນຄວາມຄາດຫວັງຂອງເຂົາ. ສໍາລັບດານີເອນ, ເຖິງຢ່າງໃດກໍຕາມ, ມີບາງສິ່ງຕື່ມອີກຄື ພຣະເຈົ້າໃຫ້ຄວາມສາມາດເຂົ້າໃຈ "ນິມິດແລະຄວາມຝັນທຸກປະເພດ"(ຂໍ້ 17). ນີ້ແມ່ນອິດທິຣິດທີ່ບໍ່ສາມາດສິດສອນກັນໄດ້. ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດຮັບຜິດຊອບສໍາລັບຄວາມສາມາດນີ້.

ກະສັດເນບູກາເນັດຊາໄດ້ມີຄວາມຝັນທີ່ລົບກວນເພິ່ນຢ່າງແຮງ, ແຮງຫຼາຍ ຈົນວ່າກະສັດໄດ້ມີຄໍາສັ່ງໃຫ້ສະມາຊິກຂອງສານມາແກ້ຄວາມຝັນໃຫ້ເພິ່ນ. ບໍ່ມີໃຜມີອາຊີບແກ້ຄວາມຝັນເຕັມເວລາ, ແຕ່ ເນບູກາເນັດຊາໄດ້ເອີ້ນ "ໝໍມາຍາກົນ, ໝໍຜີ, ໝໍມົນແລະໝໍດູ" ພາສາບາບີໂລນແປວ່າໂຫຣາຈານ(ດນອ 2:2)ມາເຂົ້າເຝົ້າ. ຊາວບາບີໂລນເຊື່ອວ່າພະຕ່າງໆຂອງພວກເຂົາສື່ສານທາງຄວາມຝັນ. ຖ້າວ່າຄວາມໝາຍຂອງຄວາມຝັນບໍ່ຊັດເຈນຕໍ່ຜູ້ທໍານວາຍ, ລາວອາດຈະປຶກສາກັບປຶ້ມຄູ່ມືຄວາມຝັນ, ຊຶ່ງຈັດລໍາດັບຄວາມຝັນທີ່ຜ່ານມາແລະເຫດການທີ່ເກີດຕາມມາຢ່າງກະທັນຫັນນັ້ນ. ຜູ້ທີ່ເຂົ້າຮ່ວມການທໍານວາຍແລະການແປເຫຼົ່ານັ້ນ ໄດ້ຮັບການອົບຮົມຢ່າງກ້ວາງຂວາງສາມາດເຂົ້າໃຈຄວາມໝາຍຂອງໝາຍສໍາຄັນໃນທ້ອງຟ້າແລະເທິງແຜ່ນດິນ. ເຂົາຊອກຫາຂໍ້ມູນນໍາດວງດາວແລະດາວຫາງ, ນໍາການເກີດລູກແປກໆຫຼືຜິດປົກກະຕິ, ແລະນໍາລັກສນະລໍາໄສ້ຂອງສັດທີ່ຖືກນໍາມາຖວາຍ.

ພຣະເຈົ້າໄດ້ສັ່ງຫ້າມໄພ່ພົນຂອງພຣະອົງບໍ່ໃຫ້ປຶກສາບຸກຄົນອາຊີບນັ້ນ(ພບຍ2 18:14). ສະນັ້ນ ບາບີໂລນຈຶ່ງບໍ່ໄດ້ເຂັ້ມງວດໃນເຣື່ອງນີ້. ດັ່ງນັ້ນເນບູກາເນັດຊາຢາກໃຫ້ຜູ້ຖືກເລືອກເປັນທີ່ປຶກສາຂອງເພິ່ນບອກຄວາມໝາຍຂອງຄວາມຝັນຮ້າຍແກ່ຕົນ; ເຖິງຢ່າງໃດກໍຕາມ, ພຣະຣາຊາປະຕິເສດທີ່ຈະບອກເນື້ອໃນຂອງຄວາມຝັນນັ້ນ. ຄໍາສັ່ງທີ່ບໍ່ມີເຫດຜົນຂອງເພິ່ນອາດຈະເປັນວິທີການກວດສອບຄວາມຖືກຕ້ອງຂອງຄວາມຝັນ ແລະຄໍາແປຂອງມັນ.

ເມື່ອໄດ້ຍິນຄໍາຮ້ອງຂໍທີ່ເປັນໄປບໍ່ໄດ້ຂອງກະສັດ, ພວກໝໍວິຊາອາຄົມໄດ້ທູນພຣະຣາຊາວ່າ, "ບໍ່ມີຄົນໃດດອກໃນພື້ນພິພົບນີ້ສາ-ມາດບອກສິ່ງທີ່ກະສັດຢາກຮູ້ໄດ້ ບໍ່ມີພຣະຣາຊາອົງຍິ່ງໃຫຍ່ ແລະຊົງຣິດອົງໃດໄຕ່ຖາມເຊັ່ນນີ້ກັບພວກໝໍດູ ໝໍມົນແລະ ໝໍວິຊາອາຄົມ"(ດນອ 12:10). ໂຫຣາຈານພວກນີ້ບໍ່ເຄີຍເວົ້າຄວາມຈິງອັນໃດກວ່າປໂຍກນີ້. ເຕັມລົ້ນດ້ວຍຄວາມຜິດຫວັງ ພຣະຣາຊາຈຶ່ງສັ່ງປະຫານພວກໂຫຣາຈານໃຫ້ຕາຍ. ຄໍາສັ່ງນີ້ລວມທັງດານີເອນນໍາ.

ດານີເອນໄດ້ສະແດງທ່າທີ, ຄວາມສຸຂຸມ, ສະຕິປັນຍາ, ຄວາມອົດກັ້ນເມື່ອນາຍທະຫານຂອງພຣະຣາຊາຍັບເຂົ້າມາໃກ້ແລະອະທິບາຍພຣະດໍາຣັດແລະຄໍາກ່າວໂທດ. ດານີເອນຮູ້ວ່າການລົງໂທດນັ້ນຮຸນແຮງຫຼາຍ, ແຕ່ລາວບໍ່ໄດ້ຕົກໃຈ, ບໍ່ໄດ້ຖຽງ, ບໍ່ໄດ້ຂູ່ຄົນຍາມ, ຫຼືຫາທາງປ້ອງກັນຕົວ. ລາວໄດ້ນໍາເຣື່ອງນີ້ເຂົ້າກາບທູນຜູ້ມີອໍານາດຍິ່ງໃຫຍ່ໃນແຜ່ນດິນ; ດານີເອນໄດ້ປາກົດຕົວຕໍ່ໜ້າເນບູກາເນັດຊາ. ເພື່ອສະແດງຄວາມເຄົາຣົບແລະສະແດງພາບສະຕິປັນຍາຕັ້ງແຕ່ນີ້ຕໍ່ໄປ, ດານີເອນພຽງແຕ່ຂໍເລື່ອນເວລາອອກໄປ. ເພິ່ນຮູ້ດີວ່າພຣະເຈົ້າຜູ້ດຽວທີ່ສາມາດບອກເນື້ອໃນແລະຄໍາແປຄວາມຝັນຂອງພຣະຣາຊາໄດ້. ດານີເອນຕ້ອງການເວລາຊອກຫາພຣະພັກພຣະເຈົ້າ. ດານີເອນບໍ່ໄດ້ທູນຂໍສໍາລັບສະຖານະການນີ້. ເພິ່ນບໍ່ໄດ້ຫາທາງເອົາມັນອອກໄປ. ເພິ່ນບໍ່ໄດ້ຫວັງໃຫ້ປະຕິຫານເຂົ້າຂ້າງເພິ່ນທີ່ອາດຈະເຮັດໃຫ້ເພິ່ນໄດ້ຮັບການຍົກຍ້ອງລະດັບຊາດ ແລະມີຊື່ສຽງໃນປວັດສາດ. ແລ້ວ, ກໍເປັນດັ່ງນີ້.

ປົກກະຕິແລ້ວສະຖານະການຖະຫຼົ່ມເຮົາດ້ວຍການທ້າທາຍ, ເຕັມດ້ວຍຄວາມກົດດັນ, ແລະສະຖານະການທີ່ປ່ຽນແປງຊີວິດທີ່ໜ້າຢ້ານຊຶ່ງພວກເຮົາບໍ່ໄດ້ສແວງຫາຫຼືປາຖນາ. ພວກເຮົາສາມາດພົບເຫັນຕົວເຮົາເອງຕົກຢູ່ໃນສະຖານະການທີ່ຄືວ່າຈະເປັນໄປບໍ່ໄດ້. ໃນທ່າທີຂອງດານີເອນສາມາດໃຊ້ເປັນແບບຢ່າງແກ່ເຮົາ. ລາວໄດ້ສະແດງໃຫ້ເຫັນ ສະຕິປັນຍາໃນການລໍຄອຍ; ລາວໄດ້ສະແດງເຖິງຄວາມອົດທົນ, ຮູ້ວ່າລາວຕ້ອງການເວລາສໍາລັບອະທິຖານ.

*ຮີດຄອງປະເພນີມີອິດທິພົນໃຫ້ເຮົາແກ້ບັນຫາດ້ວຍຕົວເອງຢ່າງໃດ?*

## 2. <u>ດານີເອນ 2:17-19.</u>

*17 ແລ້ວດານີເອນໄດ້ກັບຄືນເມືອເຮືອນຂອງຕົນ ບອກເຣື່ອງທີ່ເກີດຂຶ້ນໃຫ້ຮານານີຢາ ມີຊາເອນ ແລະອາຊາຣີຢາເພື່ອນຂອງຕົນຮູ້.*
*18 ເພິ່ນໄດ້ບອກໃຫ້ພວກໝູ່ເພື່ອນອ້ອນວອນ ຂໍໃຫ້ພຣະເຈົ້າທີ່ຢູ່ເທິງສວັນຊັ້ນຟ້າຊົງໂຜດອະທິບາຍເຣື່ອງເລິກລັບນີ້ໃຫ້ແກ່ພວກເຂົາ*

*ເພື່ອພວກເຂົາຈະບໍ່ຖືກຂ້າຕາຍ ເໝືອນຢ່າງທີ່ປຶກສາຄົນອື່ນໆໃນກຸງບາບີໂລນ.* [19]*ແລ້ວໃນຄືນນັ້ນ ພຣະເຈົ້າໄດ້ຊົງເຜີຍເຣື່ອງເລິກ ລັບນີ້ໃຫ້ດານີເອນຮູ້ທາງນິມິດ ດັ່ງນັ້ນ ເພິ່ນຈຶ່ງສັຣເສີນພຣະເຈົ້າເທິງສວັນຊັ້ນຟ້າວ່າ,*

ດານີເອນບໍ່ແມ່ນນັກຫຼິ້ນກົນ, ໝໍຜີ, ໝໍມົນ ຫຼືໂຫຣາຈານຜູ້ນຶ່ງຂອງບາບີໂລນ. ຄວາມຄິດກ່ຽວກັບປຶ້ມການປຶກສາດ້ານຄວາມຝັນບໍ່ເຄີຍເຂົ້າມາໃນຫົວຂອງເພິ່ນ. ເຖິງຢ່າງໃດເພິ່ນກໍເປັນຄົນຂອງພຣະເຈົ້າ. ດັ່ງນັ້ນເພິ່ນຮູ້ວ່າຈະໄປຫາຄວາມຊ່ອຍເຫຼືອຢູ່ໃສ. ດານີເອນໄດ້ເຮັດຫຍັງແດ່?

**1. ດານີເອນໄດ້ຂໍຮ້ອງໃຫ້ເພື່ອນທັງສາມຂອງເພິ່ນອະທິຖານນຳເພິ່ນແລະທູນຂໍພຣະເຈົ້າສຳແດງຄວາມເມດຕາແລະເປີດເຜີຍຄວາມເລິກລັບຄວາມຝັນຂອງພຣະຣາຊາ.** ຄຳອະທິບາຍຄຳວ່າ “ເລິກລັບ” ໝາຍເຖິງພຽງສິ່ງທີ່ບໍ່ຮູ້ຈັກ; ມັນສາມາດໝາຍເຖິງບາງສິ່ງທີ່ນອກເໜືອຄວາມເຂົ້າໃຈ. ດານີເອນບໍ່ໄດ້ຊອກຫາສິ່ງທີ່ນອກເໜືອຄວາມສາມາດຂອງມະນຸດທີ່ຈະເຂົ້າໃຈ; ເພິ່ນພຽງແຕ່ຢາກຮູ້ເນື້ອໃນແລະຄວາມໝາຍຄວາມຝັນຂອງເນບູກາເນັດຊາ. ພຣະຄັມພີບໍ່ໄດ້ຣະບຸວ່າເພື່ອນສາມຄົນຂອງດານີເອນຕອບໂຕ້ຢ່າງໃດເມື່ອເຂົາໄດ້ຍິນຄຳຂໍຮ້ອງທີ່ບໍ່ມີເຫດຜົນ, ຄຳຂົ່ມຂູ່. ບໍ່ຕ້ອງສົງສັຍເລີຍວ່າ, ຄຳບອກເລົ່າຂອງດານີເອນຈະເປີດເຜີຍຄວາມຮ້າຍແຮງຂອງສະຖານະການ. ເພິ່ນໄດ້ຊຸກຍູ້ໃຫ້ເພື່ອນ ໆ “ທູນຂໍ” ພຣະເຈົ້າ-ຄຳກິຣິຍາພາເຮັບເຣີເອົາແນວຄວາມຄິດຂອງການອ້ອນວອນ. ສະນັ້ນ ທັງສີ່ຄົນຈຶ່ງໄດ້ອ້ອນວອນຕໍ່ພຣະເຈົ້າ.

*ຜົນປໂຍດຂອງການອະທິຖານກັບຜູ້ອື່ນມີຫຍັງແດ່?*

**2. ດານີເອນເອງກໍໄດ້ອະທິຖານ (ດນອ 2:23).** ມີຄົນອື່ນອະທິຖານເພື່ອເຮົາກໍຊ່ອຍໄດ້ດີ, ອະທິຖານເພື່ອຕົວເຮົາເອງກໍຍິ່ງສຳຄັນ. ພຣະຄັມພີພາກພຣະສັນຍາໃໝ່ສອນວ່າການອະທິຖານຢ່າງແຮງກ້າຂອງຜູ້ຊອບທັມເກີດຜົນສຳເຣັດຫຼາຍ (ຢກບ 5:16). ແນ່ນອນ, ຖ້າຜູ້ໃດອະທິຖານຢ່າງແຮງກ້າ, ແມ່ນດານີເອນ-ກັບເພື່ອນທັງສາມຂອງເພິ່ນ. ຊີວິດຂອງເຂົາຕົກຢູ່ໃນຄວາມສ່ຽງ. ເຖິງວ່າພວກເຮົາບໍ່ຮູ້ວ່າເນື້ອໃນໃຈຄວາມຄຳອະທິຖານຂອງຊາວເຮັບເຣີທັງສີ່ຄົນ, ພວກເຮົາກໍໝັ້ນໃຈວ່າພວກເຂົາອະທິຖານເພື່ອກັນແລະກັນ ແລະຕົວເຂົາເອງ. ຜູ້ຂຽນພຣະທັມເຮັບເຣີກ່າວວ່າ,“*ເຫດສັນນັ້ນໃຫ້ເຮົາທັງຫລາຍມີໃຈກ້າເຂົ້າໄປເຖິງພຣະທີ່ນັ່ງແຫ່ງພຣະຄຸນເພື່ອພວກເຮົາຈະໄດ້ຮັບພຣະເມດຕາ ແລະ ພົບພຣະຄຸນທີ່ຈະຊ່ອຍເຮົາໃນເວລາທີ່ຕ້ອງການ (ຮຮ 4:16*).

**3. ດານີເອນຄາດຫວັງວ່າພຣະເຈົ້າຈະຕອບ.** ດານີເອນມີຄວາມໝັ້ນໃຈເຕັມສ່ວນວ່າພຣະເຈົ້າຈະເປີດເຜີຍຄວາມລຶກລັບ, ແຜ່ຄວາມເມດຕາ, ແລະປ້ອງກັນຊີວິດຂອງດານີເອນ, ເພື່ອນຊາວເຮັບເຣີຂອງເພິ່ນ, ແລະໂຫຣາຈານຂອງບາບີໂລນທີ່ເຫຼືອ. ນັ້ນແມ່ນສິ່ງພຣະເຈົ້າໄດ້ກະທຳແນ່ນອນ. ພຣະທັມບໍ່ໄດ້ເວົ້າວ່ານິມິດໄດ້ມາຕອນດານີເອນນອນຫຼັບ. ຄວາມຢ້ານອາດເຮັດໃຫ້ທັງສີ່ຄົນນອນບໍ່ຫຼັບ. ເຂົາອາດຈະອະທິຖານຕິດໆຕໍ່ໆຈົນກະທັ້ງນິມິດໄດ້ມາ.

**4. ດານີເອນສັຣເສີນພຣະເຈົ້າສຳລັບການຕອບຄຳອະທິຖານ.** ການໄດ້ຮັບນິມິດກ່ຽວກັບຄວາມຝັນຂອງພຣະຣາຊາ, ດານີເອນອາດຮີບກັບຄືນໄປພຣະຣາຊວັງ, ຕື່ນເຕັ້ນຢາກເລົ່າເນື້ອໃນຄວາມຝັນແລະຄຳແປຄວາມຝັນຂອງເນບູກາເນັດຊາ. ແທນທີ່ຈະເຮັດດັ່ງນັ້ນ, ເພິ່ນໂຈະແລະນະມັສການພຣະເຈົ້າທີ່ໄດ້ຕອບຄຳອະທິຖານຂອງເພິ່ນ. ຫຼາຍໆເທື່ອພວກເຮົາຖືພຣະເຈົ້າເໝືອນຕູ້ເຄື່ອງຂາຍ. ເມື່ອເຮົາປ່ອນຄຳຮ້ອງຂໍ, ແລະເມື່ອໄດ້ສົມໃຈແລ້ວ, ກໍຮີບໜີໄປ, ພໍໃຈເພາະເຮົາໄດ້ຮັບສິ່ງທີ່ຢາກໄດ້ແລ້ວ. ຈື່ຈຳຄຳຖາມທີ່ພຣະເຢຊູຖາມຄົນຂີ້ທູດ, ຍິງຊາມາເຣັຽ, ຜູ້ທີ່ໄດ້ກັບມາຂອບຄຸນພຣະອົງສຳລັບການປິ່ນປົວ: “ບໍ່ແມ່ນສິບຄົນບໍ່ທີ່ສະອາດ? ອີກເກົ້າຄົນຢູ່ໃສ?” (ລກ 17:17). ພວກເຮົາຢ່າລືມຂອບຄຸນພຣະເຈົ້າທີ່ໄດ້ຕອບຄຳອະທິຖານ.

## 3. <u>ດານີເອນ 2:20-23, 27-28</u>.

[20]*“ຂໍສັນລະເສີນພຣະນາມຂອງພຣະເຈົ້າຕລອດໄປເປັນນິດ ພຣະອົງຊົງມີປັນຍາ ແລະມີເດຊານຸພາບ.* [21]*ພຣະອົງຊົງຄວບຄຸມກາລະ ເວລາ ຊົງແຕ່ງຕັ້ງ ແລະປົດພຣະຣາຊາຊົງປະທານປັນຍາ ແລະຄວາມຮູ້ຮອບດ້ານໃຫ້ມະນຸດ.* [22]*ຊົງເປີດເຜີຍສິ່ງເລິກລັບແລະລັບລີ້ ຊົງຮູ້ສິ່ງທີ່ຢູ່ໃນຄວາມມືດ ແລະ ຊົງມີແສງສວ່າງຢູ່ອ້ອມຮອບ.* [23]*ໂອ ພຣະເຈົ້າແຫ່ງບັນພະບູລຸດຂອງຂ້ານ້ອຍ ຂ້ານ້ອຍສັຣເສີນແລະ*

*ຖວາຍພຣະກຽດແດ່ພຣະອົງ ພຣະອົງຊົງປະທານປັນຍາ ແລະກຳລັງໃຫ້ຂ້ານ້ອຍ ຊົງຕອບຄຳອ້ອນວອນຂອງຂ້ານ້ອຍ ແລະຊົງໃຫ້ພວກຂ້ານ້ອຍຮູ້ຈັກຕອບພຣະຣາຊາ.* [27]*ດານີເອນທູນພຣະຣາຊາວ່າ, "ຂ້າແດ່ພຣະຣາຊາ ບໍ່ມີໝໍວິຊາອາຄົມ ໝໍມົນ ໝໍມໍ ຫຼື ໝໍດູເລີກຍາມ ຄົນໃດດອກບອກພຣະອົງຢ່າງນັ້ນໄດ້.* [28]*ມີແຕ່ພຣະເຈົ້າເທິງສວັນຊັ້ນຟ້າທີ່ຊົງສາມາດເປີດເຜີຍຄວາມເລິກລັບ ທັງຫຼາຍໄດ້ ຂ້າແດ່ພຣະຣາຊາ ພຣະເຈົ້າໄດ້ຊົງບອກໃຫ້ພຣະອົງຮູ້ສິ່ງທີ່ຈະເກີດຂຶ້ນໃນອະນາຄົດ.*

ເມື່ອໄດ້ຮັບການເຂົ້າມາຊ່ວຍຂອງພຣະເຈົ້າ, ດານີເອນໄດ້ຖວາຍກຽດພຣະອົງ. ພຣະຜູ້ເປັນເຈົ້າໄດ້ຊົງກະທຳໃນສິ່ງທີ່ພະຂອງບາບີໂລນບໍ່ມີຣິດເຮັດໄດ້ຄື ພຣະອົງໄດ້ເປີດເຜີຍຄວາມເລິກລັບແກ່ດານີເອນ. ຄຳສັຣເສີນຂອງດານີເອນໃນ (ດນອ 2:20-23) ເຍີງໃຫ້ເຫັນພຣະລັກສນະທີ່ບໍ່ມີຂີດຈຳກັດຂອງພຣະອົງຄື:

- **ພຣະເຈົ້າສະຖິດຢູ່ທຸກຫົນທຸກແຫ່ງ.** ພຣະທັມຄັມພີເລີ້ມຕົ້ນດ້ວຍການປະກາດວ່າພຣະເຈົ້າເປັນພຣະຜູ້ສ້າງສວັນແລະແຜ່ນດິນໂລກ (ປຖກ 1:1). ບໍ່ມີບ່ອນໃດທີ່ພຣະອົງຈະໄປບໍ່ເຖິງ. ນີ້ອາດເປັນແນວຄວາມຄິດແປກແກ່ຄົນບູຮານໃນເຂດໃກ້ຕາເວັນອອກ. ຄົນເຄີຍເຊື່ອວ່າພະຂອງເຂົາອາສັຍຢູ່ໃນວັດຖຸສິ່ງໃດສິ່ງນຶ່ງເຊັ່ນ, ວິຫານ, ວັດ, ຫຼື ໃນເມືອງ.
- **ພຣະເຈົ້າເຮັດໄດ້ທຸກສິ່ງ.** ດານີເອນປະກາດວ່າພຣະເຈົ້າປ່ຽນເວລາແລະຣະດູການ, ແລະພຣະອົງສາມາດປົດແລະແຕ່ງຕັ້ງກະສັດ. ຄຳຖແລງການນີ້ເນັ້ນຣິດອຳນາດທົ່ວຈັກກະວານຂອງພຣະເຈົ້າ. ພຽງແຕ່ພຣະອົງຜູ້ດຽວທີ່ມີຣິດອຳນາດປ່ຽນເວລາແລະຣະດູການໄດ້.
- **ພຣະເຈົ້າຊົງຮູ້ທຸກຢ່າງ.** ດານີເອນກ່າວວ່າປັນຍາເປັນຂອງພຣະເຈົ້າ; ພຣະອົງໄດ້ປະທານປັນຍານັ້ນແກ່ດານີເອນໂດຍການເປີດເຜີຍຄວາມຝັນຂອງກະສັດໃຫ້ແກ່ເພິ່ນ. ພຣະເຈົ້າໄດ້ສ່ອງສວ່າງໃສ່ບ່ອນເລິກ, ມືດ, ແລະສິ່ງລີ້ລັບທີ່ຢູ່ໃນຫົວຄິດແລະຄວາມຊົງຈຳຂອງເນບູກາເນັດຊາ. ພຣະເຈົ້າເປີດເຜີຍວ່າພຣະອົງສາມາດເຮັດສິ່ງທີ່ບໍ່ມີໂຫຣາຈານ, ໝໍຜີ, ໝໍມາຍາກົນ, ຫຼືໝໍມໍຄົນໃດສາມາດເຮັດໄດ້ຫຼືແມ້ກະທັ້ງພະຕ່າງໆຂອງບາບີໂລນກໍບໍ່ສາມາດເຮັດໄດ້. ຖ້ອຍຄຳຂອງດານີເອນໄດ້ເນັ້ນເຖິງຄວາມສະເພາະແລະຄວາມຍິ່ງໃຫຍ່ຂອງພຣະເຈົ້າເທິງສວັນຊັ້ນຟ້າ. ບໍ່ເປັນທີ່ປລາດໃຈພຣະນາມຂອງພຣະອົງຈຶ່ງເປັນທີ່ສັຣເສີນຕລອດໄປເປັນນິດ.

## ນຳໃຊ້ໃນຊີວິດ

ການອະທິຖານຂອງເຮົາເຮັດໃຫ້ແຕກຕ່າງແທ້ຈິງ. ຈົ່ງເລືອກການນຳໃຊ້ໃນຊີວິດຂໍ້ນຶ່ງຕໍ່ລົງໄປນີ້:

➢ **ເລີ້ມບັນທຶກຄຳອະທິຖານ.** ເລີ້ມບັນທຶກຄຳອະທິຖານຄວາມເປັນຫ່ວງສ່ວນຕົວຂອງທ່ານ. ລວມທັງຂໍ້ມູນກ່ຽວກັບສິ່ງທີ່ທ່ານເປັນຫ່ວງ, ວັນທີທີ່ທ່ານຈົດແຕ່ລະລາຍການລົງ, ແລະບັນທຶກວ່າພຣະເຈົ້າໄດ້ຕອບຄຳອະທິຖານຂອງທ່ານຢ່າງໃດ.

➢ **ຮ້ອງຂໍຄູ່ອະທິຖານ.** ເຊື້ອເຊີນບາງຄົນໃຫ້ເປັນເພື່ອນຮ່ວມການອະທິຖານຂອງທ່ານຕໍ່ບັນຫາບາງຢ່າງໃນຊີວິດທ່ານ. ອະທິບາຍວ່າທ່ານອະທິຖານເພື່ອເຣື່ອງນີ້ຢ່າງໃດ. ຈົດວັນທີກ່ຽວກັບພຣະເຈົ້າໄດ້ທຳງານໃນສະພາບການນີ້, ເຖິງແມ່ນວ່າທ່ານຍັງລໍຖ້າຄຳຕອບຢູ່.

➢ **ຈົ່ງຂຽນຄຳຕອບສັຣເສີນ.** ຄິດຄືນຫຼັງຕອນທີ່ພຣະເຈົ້າຕອບຄຳອະທິຖານຂອງທ່ານ. ຈົ່ງຂຽນຄຳສັຣເສີນຕອບ ສຳລັບສິ່ງທີ່ພຣະອົງໄດ້ທຳງານໃນສະພາບການນີ້. ຈົ່ງກ່າວອອກສຽງດັງຕອບພຣະອົງ, ເປັນການຖວາຍການນະມັສການແດ່ພຣະອົງ. ແລ້ວ ເລົ່າຄຳສັຣເສີນກັບຜູ້ອື່ນເມື່ອພຣະຜູ້ເປັນເຈົ້າໃຫ້ໂອກາດທ່ານ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**